SEATTLE.GOV/DEMOCRACYVOUCHER

Democracy
Voucher Program

## ສະໜັບສະໜຸນຜູ້ສະໝັກຊິງຕຳແໜ່ງໃນເມືອງຊີແອັດໂທ

ຄູປ໋ອງສົ່ງເສີມປະຊາທິປະໄຕໃຫ້ຮູບແບບໃໝ່ແກ່ຜູ້ຢູ່ອາໄສໃນເມືອງຊີແອັດໂທໄດ້ມີສ່ວນຮ່ວມໃນການເລືອກຕັ້ງທ້ອງຖິ່ນ. ໃນປີ 2024, ຜູ້ຢູ່ອາໄສໃນເມືອງຊີແອັດໂທຈະໄດ້ຮັບຄູປ໋ອງສົ່ງເສີມປະຊາທິປະໄຕ ມູນຄ່າ $25 ສອງໃບ ທີ່ເຂົາເຈົ້າສາມາດບໍລິຈາກໃຫ້ແກ່ຜູ້ສະໝັກທີ່ຊິງຕຳແໜ່ງໃນສະພາເມືອງ.

## ເປັນຫຍັງຈຶ່ງໃຊ້ຄູປ໋ອງສົ່ງເສີມປະຊາທິປະໄຕ?

ກ່ອນໂຄງການຄູປ໋ອງສົ່ງເສີມປະຊາທິປະໄຕ, ມີພຽງ 1% ຂອງຜູ້ຢູ່ອາໄສໃນເມືອງຊີແອັດໂທເທົ່ານັ້ນເປັນຜູ້ບໍລິຈາກ. ນັບແຕ່ການຈັດຕັ້ງປະຕິບັດໂຄງການ, ຈຳນວນດັ່ງກ່າວໄດ້ເພີ່ມຂຶ້ນເກືອບເປັນ 10% ແລ້ວ. ການມີສ່ວນຮ່ວມຂອງທ່ານມີຜົນແນ່ນອນ!




## ເພື່ອໃຊ້ຄູປ໋ອງສົ່ງເສີມປະຊາທິປະໄຕ, ທ່ານຕ້ອງ:

- ☑ ເປັນຜູ້ຢູ່ອາໄສໃນເມືອງຊີແອັດໂທ,
- ☑ ມີອາຍຸຢ່າງໜ້ອຍ 18 ປີ,
- ☑ ເປັນພົນລະເມືອງສະຫະລັດ, ມີສັນຊາດສະຫະລັດ ຫຼື ເປັນຜູ້ຢູ່ອາໄສຖາວອນທີ່ຖືກກົດໝາຍ.

ທ່ານ **ບໍ່** ຈຳເປັນຕ້ອງເປັນຜູ້ມີສິດເລືອກຕັ້ງທີ່ລົງທະບຽນຈຶ່ງໄດ້ຮັບຄູປ໋ອງສົ່ງເສີມປະຊາທິປະໄຕ. ຖ້າທ່ານຕອບສະໜອງໄດ້ເງື່ອນໄຂຂ້າງເທິງ, ໃຫ້ຕິດຕໍ່ຫາຫ້ອງການຂອງພວກເຮົາເພື່ອຂໍຄຳຮ້ອງສະໝັກ.

**ຮຽນຮູ້ເພີ່ມເຕີມກ່ຽວກັບຜູ້ສະໝັກເລືອກຕັ້ງ**

## ຂໍ້ເທັດຈິງທີ່ໜ້າຮູ້

ໂຄງການນີ້ເປັນວິທີສະເພາະໃຫ້ຜູ້ຢູ່ອາໄສເມືອງຊີແອັດໂທ, ລວມທັງຜູ້ຖືບັດຂຽວ, ໄດ້ມີສ່ວນຮ່ວມໃນການເລືອກຕັ້ງທ້ອງຖິ່ນ.

ໃນເດືອນພະຈິກ 2022, ເມືອງໂອກແລນ ໄດ້ລົງຄະແນນສຽງເລືອກຕັ້ງໃນໂຄງການ "ເງິນສົ່ງເສີມປະຊາທິປະໄຕ" ທີ່ຖອດແບບມາຈາກໂຄງການຂອງເມືອງຊີແອັດໂທ.

ໂຄງການຄູປ໋ອງສົ່ງເສີມປະຊາທິປະໄຕສືບຕໍ່ໄດ້ຮັບຄວາມສົນໃຈຈາກເຂດປົກຄອງຕ່າງໆໃນສະຫະລັດ ແລະ ຕ່າງປະເທດ!

democracyvoucher@seattle.gov | (206) 727-8855

SEATTLE.GOV/DEMOCRACYVOUCHER